ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນ ແບບກົດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

EY

Building a better working world

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງຜູ້ກວດສອບອິດສະຫຼະ	5 - 7
ໃບລາຍງານຖານະການເງິນແຍກກິດຈະການ	8 - 9
ໃບລາຍງານຜົນການດຳເນີນງານແຍກກິດຈະການ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແຍກກິດຈະການ	11
ໃບລາຍງານກະແສເງິນສົດແຍກກິດຈະການ	12 - 13
ບົດອະທິບາຍຊໍ້ລວມທ້າຍເອກະສານລາຍງານການເງິນແຍກກິດຈະການ	14 - 37

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊິມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບໃນຂອງບໍລິສັດທີ່ເຊັ່ນຍັນຂອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຢິນຍອມສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ຍາຍໃຕ້ຊື່ຫຍໍ້ "LCTC") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈທລ ສຳຫຼັບການປ່ຽນຊື່ ຂອງບໍລິສັດຈາກ ບໍລິສັດ ຊິມັ່ງລາວ ຈຳກັດ ມາເປັນ ບໍລິສັດ ຊິມັ່ງລາວ ມະຫາຊົນ.

ວັນທີ 2 ຍຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດສ້ຶ້ນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນຊິມັ່ງອື່ນໆທີ່ກ່ຽວຂ້ອງ ມາເປັນການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທລ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳຫຼັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊິມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ໂຄງສ້າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັນ*
Yunnan Hengshi Chengrui Holdings Co., Ltd (ກ່ອນໜ້ານີ້ແມ່ນໃນນາມ Yunnan Qianhan Technology Network Limited ("Yunnan Qianhan")	14,280,000	35.696%
ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%
ບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (LCS)	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງ ມີໂຮງງານຊິມັ່ງວັງວຽງ ຫຼັງ 2 (ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວັນທອງ ສີດທິວົງ	ຮອງປະທານ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020
ທ່ານ ສິນທະນຸ ສິມທັດຊຸດາຕະຍົນ	ຮອງປະທານ	ແຕ່ງຕັ້ງນະວັນທີ 28 ມິຖຸນາ 2024
ທ່ານ ຈ່າງ ຈິ້ງຫົວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ນາງ ຊ້ຳຍ ຫລ້ຽງຫລ້ຽງ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ໋ງ ເຊິ່ນຊູ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 05 ພະຈິກ 2024
ທ່ານ ຕົ໋ງ ຢຸ້ຕົ໋ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ນາງ ສີ ຢຸ່ຕົ໋ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024
ທ່ານ ດຳເນີນ ໄຊເລີ່ນວົງ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020
ທ່ານ ໄຕ ຫຼົ່ງຫົວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຫລີ ອ້ຳວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວິງວິຈິດ ແກ້ວວົງກົດ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020 ລາອອກນະວັນທີ 15 ກຸມພາ 2024
ທ່ານ ຫຼຸ ຫຼິ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 03 ເມສາ 2024
ທ່ານ ວິຕ້ຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມ ມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ປະທານ ຄະນະອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ໋ງ ຢຸ້ຕົ໋ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ຈ່າງ ຈິ້ງຫົວ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ດຳເນີນ ໄຊເລີ່ນວົງ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020
ທ່ານ ວິງວິຈິດ ແກ້ວວົງກົດ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020 ລາອອກນະວັນທີ 15 ກຸມພາ 2024
ທ່ານ ຫຼຸ ຫຼິ	ຮອງຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 03 ເມສາ 2024
ທ່ານ ເຊຍ ລວງອຸ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 03 ເມສາ 2024

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ໄຕ ຫຼົງຫົວ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ໋ງ ເຊັ້ນຮຸ່	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 05 ພະຈິກ 2024
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ຫວິວ ຄ້ຳວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດພາຍໃນປີ ແລະ ນະວັນທີເປີດເຜີຍບົດລາຍງານສະບັບນີ້ແມ່ນ ທ່ານ ເນີຍ ເຫຼຍ ຕຸ້ຍ ຕຳແໜ່ງ ຜູ້ອຳນວຍການໃຫຍ່ ແລະ ປະທານສະພາບໍລິຫານ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນ ແລະ ເອກະສານລາຍງານການເງິນແຍກກິດຈະການສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີຕົ້ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນແຍກກິດຈະການ, ຜົນຂອງການດຳເນີນງານແຍກກິດຈະການ ແລະ ກະແສເງິນສົດແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນແຍກກິດຈະການ; ແລະ
- ກະກຽມເອກະສານລາຍງານການເງິນແຍກກິດຈະການບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ນັບແຕ່ໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານການເງິນແຍກກິດຈະການແມ່ນສອດຄ່ອງກັບລະບຽບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນບໍລິສັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ກົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນແຍກກິດຈະການສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນແຍກກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ.

ໃນນາມຂອງຄະນະອຳນວຍການ:

ເນັຍ ຫຼຽ

ທ່ານ ເນັຍ ຫຼຽ
ຕຳແໜ່ງ ປະທານຄະນະອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

Ernst & Young Lao Co., Ltd.
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີ່ອ້າງອີງ: 11728747/E-6849455-ແຍກກິດຈະການ

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ຍຸງ : ຜູ້ຖືຫຸ້ນຂອງ ກຸ່ມບໍລິສັດ ຫ່ອງຫ່ຽວວັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳຄິດເຫັນແບບບໍ່ມີເງື່ອນໄຂ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນແຍກກິດຈະການ ຂອງ ກຸ່ມບໍລິສັດ ຫ່ອງຫ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ"), ເຊິ່ງລວມມີ ໃນລາຍງານຖານະການເງິນແຍກກິດຈະການ ນະວັນທີ 31 ທັນວາ 2024, ແລະ ໃນລາຍງານຜົນການດຳເນີນງານແຍກກິດຈະການ, ໃນລາຍງານສ່ວນປ່ຽນແປງທຶນເຈົ້າຂອງແຍກກິດຈະການ ແລະ ໃນລາຍງານກະແສເງິນສົດແຍກກິດຈະການ ສຳລັບປີທີ່ສິ້ນສຸດວັນທີ່ດັ່ງກ່າວ ແລະ ບົດອະທິບາຍຄໍ່ອນຂ້າງເອກະສານລາຍງານການເງິນແຍກກິດຈະການ, ລວມທັງບົດສະຫຼຸບຂອງນະໂຍບາຍການບັນຊີທີ່ສຳຄັນ.

ເນື່ອງຈາກຄວາມສຳຄັນຂອງບັນຫາຕ່າງໆທີ່ໄດ້ອະທິບາຍໄວ້ໃນວັກພື້ນຖານໃນການບໍ່ສະແດງຄຳຄິດ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມພຽງພໍເພື່ອເປັນພື້ນຖານໃຫ້ແກ່ການຄຳຄິດສຳລັບການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳຄິດຕໍ່ກັບເອກະສານລາຍງານການເງິນແຍກກິດຈະການດັ່ງກ່າວ.

ພື້ນຖານໃນການບໍ່ສະແດງຄຳຄິດ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນແຍກກິດຈະການ, ບໍລິສັດມີການຂາດທຶນສຸດທິຈຳນວນ 4.8 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ນະວັນທີດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມຈຳນວນ 79.86 ຕື້ກີບ ແລະ ມີໜີ້ສິນໝຸນວຽນຈຳນວນ 77.26 ຕື້ກີບ ເຊິ່ງເກີນມູນຄ່າຂອງຊັບສິນໝຸນວຽນຈຳນວນ 55.54 ຕື້ກີບ. ເງື່ອນໄຂເຫຼົ່ານີ້ບົ່ງຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ມີສາລະອັນສຳຄັນ ທີ່ເຮັດໃຫ້ເກີດຄວາມສົງໄສອັນໃຫຍ່ຫຼວງຕໍ່ຄວາມສາມາດຂອງບໍລິສັດໃນການສືບຕໍ່ການດຳເນີນງານຕາມຫຼັກການແຫ່ງຄວາມສືບເນື່ອງ. ເອກະສານລາຍງານການເງິນແຍກກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມບົນພື້ນຖານຫຼັກການແຫ່ງຄວາມສືບເນື່ອງ ໂດຍອີງຕາມຂໍ້ສົມມຸດຖານທີ່ວ່າບໍລິສັດມີຊັບສະພາກອນພຽງພໍ ໃນການຊຳລະໜີ້ສິນຂອງຕົນໃຫ້ກັບພາກສ່ວນທີ່ສາມ ແລະ ພຽງພໍສຳລັບສືບຕໍ່ດຳເນີນງານໃນປີຕໍ່ໄປ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດການກະແສເງິນສົດເພື່ອຮອງຮັບການຊຳລະໜີ້ ແລະ ແຜນການດຳເນີນທຸລະກິດ, ໂດຍອີງຈາກຄວາມຄາດຫວັງທີ່ບໍ່ສາມາດໄດ້ຮັບການສະໜັບສະໜຸນຢ່າງເປັນທາງການຈາກຜູ້ຖືຫຸ້ນຂອງຕົນ ແລະ ມີຄວາມສາມາດໃນການຂາຍເຄື່ອງໃນສາງ. ຈາກຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າ ບໍ່ໄດ້ຮັບຫຼັກຖານທີ່ເໝາະສົມພຽງພໍເພື່ອຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງບໍລິສັດ ໃນການກະກຽມການຄາດການກະແສເງິນສົດດ້ານເທິງ. ດັ່ງນັ້ນ, ພວກຂ້າພະເຈົ້າ ຈຶ່ງບໍ່ສາມາດພິຈາລະນາຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງ ໃນການກະກຽມເອກະສານລາຍງານການເງິນແຍກກິດຈະການເຫຼົ່ານີ້ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024.

Building a better working world

ບັນຫາທີ່ຄວນເອົາໃຈໃສ່

ນະໂຍບາຍບັນຊີ

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ, ເຊິ່ງໄດ້ລະບຸກ່ຽວກັບ ນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີດັ່ງນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນແຍກກິດຈະການຜົນການດຳເນີນງານແຍກກິດຈະການ ແລະ ກະແສເງິນສົດແຍກກິດຈະການບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືຍອມຮັບໂດຍທົ່ວໄປ.

ບົດສະຫຼຸບຂອງບໍລິສັດແມ່ນຍັງບໍ່ໄດ້ດັດແກ້ໃນບັນຫານີ້

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ມີອຳນາດໃນການຄວບຄຸມ ຕໍ່ເອກະສານລາຍງານການເງິນແຍກກິດຈະການ

ຄະນະອຳນວຍການຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ ຕາມ ນະໂຍບາຍການບັນຊີທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແຍກກິດຈະການ, ແລະ ບັນດາການຄວບ ຄຸມພາຍໃນຕາມທີ່ຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ ໃຫ້ມີຄວາມ ຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນແຍກກິດຈະການ, ຄະນະອຳນວຍການແມ່ນຮັບຜິດຊອບໃນການປະເມີນ ຄວາມສາມາດ ຂອງບໍລິສັດດ້ານຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາຕ່າງໆທີ່ກ່ຽວກັບຄວາມສ່ຽງເບື້ອງຂອງການດຳເນີນທຸລະກິດ, ຕາມມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ ທາງຄະນະອຳນວຍ ການ ມີຈຸດປະສົງຍຸບເລີກບໍລິສັດ, ຫຼື ຍຸບເລີກກິດຈະການ ຫຼື ບໍ່ມີທາງເລືອກທີ່ດຳເນີນຕໍ່ໄປໄດ້ ແຕ່ຕ້ອງໄດ້ປະຕິບັດຕັ້ງກ່ອນ.

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການ ກວດກາຂະບວນການລາຍງານການເງິນ ຂອງບໍລິສັດ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງຜູ້ກວດສອບໃນການກວດສອບເອກະສານລາຍງານການເງິນແຍກປະເພດ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນເພື່ອດຳເນີນການກວດສອບເອກະສານລາຍງານການເງິນແຍກປະເພດຂອງບໍລິສັດ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ *(ISA)* ແລະ ການສະແດງຄວາມຄິດເຫັນຂອງຜູ້ກວດສອບບັນຊີ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຄວາມສຳຄັນຂອງບັນຫາທີ່ໄດ້ອະທິບາຍໃນ*ພື້ນຖານໃນການບໍ່ສະແດງຄຳຄິດ* ໃນບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດໃຫ້ຄຳຕຶກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານໃນການສະແດງຄຳຄິດເຫັນຂອງເອກະສານລາຍງານການເງິນແຍກປະເພດສະບັບນີ້.

ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບຈັນຍາບັນຂອງນັກວິຊາຊີບການບັນຊີ ທີ່ອອກໂດຍສະພາຄຸ້ມຄອງມາດຕະຖານຈັນຍາບັນຂອງນັກບັນຊີສາກົນ (ລວມທັງມາດຕະຖານສາກົນດ້ານການເປັນເອກະລາດ)(IESBA Code) ແລະ ບັນດາເງື່ອນໄຂທາງດ້ານຈັນຍາບັນອື່ນໆທີ່ກ່ຽວຂ້ອງ ເຂົ້າໃນການກວດສອບເອກະສານລາຍງານການເງິນໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດ ຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ທີ່ກ່ຽວຂ້ອງກັບເງື່ອນໄຂດັ່ງກ່າວ ແລະ ກົດລະບຽບຂອງສະພາວິຊາຊີບ.

ຕາງໜ້າ ແລະ ໃນນາມບໍລິສັດ ເອີນ ແອນ ຢັ ງ ລາວ ຈຳກັດ

ວັນ ເລ
ຜູ້ນຳສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ໃບລາຍງານຖານະທາງການເງິນແຍກສະເພາະ
ນະວັນທີ 31 ທັນວາ 2024

	ຍົກລະທຶບາຍ ເລກທີ	31 ທັນວາ 2024 ກີບ	31 ທັນວາ 2023 ກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	762,996,896	569,628,666
ຊັບສິນໝວດທີ່ສາມ	6	30,673,610,031	33,848,808,652
ຊັບສິນບັດຖືທີ່ບໍ່ມີຕົວຕົນ	5	3,681,415,835	3,689,043,755
ການລົງທຶນໃນບໍລິສັດໃນເຄືອ	7	5,203,557,146	1,189,235,074
ລວມຊັບສິນບໍ່ໝຸນວຽນ		**40,321,579,908**	**39,296,716,147**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	4,322,776,548	1,705,010,743
ເຄື່ອງໃນສາງ	9	12,324,012,453	6,880,835,715
ໜີ້ຕ້ອງຮັບຈາກພາກສ່ວນອື່ນທີ່ກ່ຽວຂ້ອງ	23	2,847,957,610	224,362,213
ໜີ້ຕ້ອງຮັບທາງການຄ້າ	10	1,656,111,790	2,464,105,715
ເງິນສົດ	11	574,997,658	1,606,207,716
ລວມຊັບສິນໝຸນວຽນ		**21,725,856,059**	**12,880,522,102**
ລວມຊັບສິນທັງໝົດ		**62,047,435,967**	**52,177,238,249**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແຍກສະເພາະກິດ (ຕໍ່)
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	31 ທັນວາ 2024 ກີບ	31 ທັນວາ 2023 ກີບ
ສິນຊັບ ແລະ ທຶນ			
ສິນຊັບໝຸນວຽນ			
ເງິນຝາກທະນາຄານ	12	8,025,747,856	1,441,398,721
ເງິນລ່ວງໜ້າຈາກລູກຄ້າ	13	12,440,807,689	20,274,717,670
ເງິນໃຫ້ກູ້ຢືມແກ່ພະນັກງານ	23	12,887,018,084	8,389,384,462
ພັນທະອາກອນ	14	8,152,671,650	6,109,246,395
ເງິນໃຫ້ກູ້ຢືມແກ່ພະນັກງານ		11,074,331,574	8,019,276,919
ເງິນໃຫ້ກູ້ຢືມອື່ນໆ	15	24,682,695,701	18,364,896,342
ລວມສິນຊັບໝຸນວຽນ		**77,263,272,554**	**62,598,920,509**
ລວມສິນຊັບທັງໝົດ		**77,263,272,554**	**62,598,920,509**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ກຳລັງສ້າງຕາມລະບຽບການ		7,704,052,546	7,704,052,546
ກຳລັງສ້າງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(79,857,330,240)	(75,063,175,913)
ລວມທຶນ		**(15,215,836,587)**	**(10,421,682,260)**
ລວມສິນຊັບ ແລະ ທຶນທັງໝົດ		**62,047,435,967**	**52,177,238,249**

ທ່ານ ເນີຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ໃບລາຍງານຜົນການດຳເນີນງານແຍກກິດຈະການ
ປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	2024 ກີບ	2023 ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	17,681,203,801	24,108,787,955
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(3,681,724,728)	(9,810,203,397)
ລາຍຈ່າຍໃນການບໍລິຫານ	19	(19,168,707,315)	(11,325,016,316)
ຂາດທຶນຈາກການດຳເນີນງານ		**(5,169,228,242)**	**2,973,568,242**
ລາຍຮັບທາງການເງິນ	20	375,073,915	8,138,373
ຕົ້ນທຶນທາງການເງິນ	21	-	(1,163,399,478)
ຂາດທຶນກ່ອນອາກອນ		**(4,794,154,327)**	**1,818,307,137**
ລາຍຈ່າຍອາກອນກຳໄລ	22	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(4,794,154,327)**	**1,818,307,137**

ທ່ານ ເນັຍເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ທຶນຈົດທະບຽນທີ່ ໄດ້ຮຸ້ນຄືນ ກີບ	ຫຸ້ນສ່ວນ ກີບ	ກຳໄລສະສົມ ລະບຽບການ ກີບ	ກຳໄລສະສົມ ເພື່ອ ຂະຫຍາຍທຸລະກິດ ກີບ	ຂາດທຶນສະສົມ ກີບ	ລວມທັງໝົດ ກີບ
ນະວັນທີ 1 ມັງກອນ 2023	20,002,000,000	18,385,975,511	7,704,052,546	18,549,465,596	(76,881,483,050)	(12,239,989,397)
ກຳໄລສຸດທິສຳລັບປີ	-	-	-	-	1,818,307,137	1,818,307,137
ນະວັນທີ 31 ທັນວາ 2023	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(75,063,175,913)**	**(10,421,682,260)**
ນະວັນທີ 1 ມັງກອນ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(75,063,175,913)**	**(10,421,682,260)**
ຂາດທຶນສຸດທິສຳລັບປີ	-	-	-	-	(4,794,154,327)	(4,794,154,327)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(79,857,330,240)**	**(15,215,836,587)**

ທ່ານ ເນັ ເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ານ ຈ້ຽຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ໃບລາຍງານກະແສເງິນສົດແຍກປະເພດກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	2024 ກີບ	2023 ກີບ
ກິດຈະກຳການດຳເນີນງານ			
(ຂາດທຶນ)/ກຳໄລ ກ່ອນອາກອນ		**(4,794,154,327)**	**1,818,307,137**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	404,116,126	3,026,514,300
ເງິນຄືນເງິນແຂ່ສຳລັບເຄື່ອງໃນສາງ	17	(8,723,578)	(610,550,245)
ເງິນຄືນເງິນແຂ່ສຳລັບໜີ້ຫວຍຍາກ	17	(49,416,000)	(7,650,143,450)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(104,188,276)	1,217,159,590
ກຳໄລຈາກການຂາຍຊັບສິນ		(5,254,392,318)	(8,794,535,894)
ການດັດແກ້ທຶນໝຸນວຽນ:			
(ເພີ່ມຂຶ້ນ)/ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄົງຄ້າງຈາກພາກສ່ວນທີ່ກ່ຽວຂ້ອງ		(1,750,520,938)	(222,082,236)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(2,833,456,321)	(1,665,724,036)
(ເພີ່ມຂຶ້ນ)/ຫຼຸດລົງຂອງເຄື່ອງໃນສາງ		(5,434,453,160)	4,598,562,382
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງຈຳນວນໜີ້ຄົງຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		18,905,808,237	23,862,314,306
ລາຍຮັບດອກເບ້ຍ		68,262	8,138,373
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳເນີນງານ		**(919,312,293)**	**15,587,960,227**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(589,856,436)	(22,420,000)
ເງິນສົດຈາກການຂາຍຊັບສິນຍັດຄືນທີ່		5,254,392,318	8,850,060,594
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		-	(3,273,189,600)
ການລົງທຶນກັບບໍລິສັດໃນເຄືອ		(4,014,322,072)	(1,189,235,074)
ຊັບສິນລວມກ່ຳອື່ນໆ		(760,529,984)	(19,006,976,169)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(110,316,174)**	**(14,641,760,249)**

	ບົດອະທິບາຍ ເລກທີ	2024 ກີບ	2023 ກີບ
ເງິນສົດ(ຫຼຸດລົງ)ເພີ່ມຂຶ້ນສຸດທິ		(1,029,628,467)	946,199,978
ເງິນສົດເບື້ອງຕົ້ນໃນໄລຍະ		1,606,207,716	643,463,064
ຜົນກະທົບຈາກຄວາມຜັນຜວນຂອງອັດຕາ ແລກປ່ຽນ		(1,581,591)	16,544,674
ເງິນສົດໃນທ້າຍປີ	**11**	**574,997,658**	**1,606,207,716**

ເນັຍເຫຼີຍ

ທ່ານ ເນັຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທ່ານ ຈ່ຽ ຈິ້ງຕົວ
ຫົວໜ້າບັນຊີ ແລະ ການເງິນ

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ້ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ້ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັ່ນສັນຍາ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນ ວັນທີ 15 ທັນວາ 1998 ລະຫວ່າງ ວັດວິສາຫະກິດພັດທະນາທະລີ ກາ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈຫວ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັ້ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັ້ງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໃບປ່ຽນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດເລກທີ 0008/ຕລຊ ອອກ ໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "LCTC") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈຫວ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ຈຳກັດ ມາເປັນ ບໍລິສັດ ຊີມັ້ງລາວ ມະຫາຊົນ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດວິສາຫະກິດສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກຫຼາຍທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກ ການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັ້ງ ແລະ ຜະລິດຕະພັນຊີມັ້ງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການ ການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 3330/ຈຫວ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ້ງວັງວຽງ ຫຼັກ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2024, ບໍລິສັດມີພະນັກງານ 59 ຄົນ (31 ທັນວາ 2023: ພະນັກງານ 52 ຄົນ)

1. ຂໍ້ມູນບໍລິສັດ (ຕໍ່)

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2024, ບໍລິສັດມີ ບໍລິສັດໃນເຄືອທັງໝົດ 8 ບໍລິສັດທີ່ມີຂໍ້ມູນທາງການເງິນ ດັ່ງຕໍ່ໄປນີ້:

ຊື່ບໍລິສັດ	*ໃບທະບຽນວິສາຫະກິດເລກທີ*	*ປະເພດທຸລະກິດ*	*% ເປັນເຈົ້າຂອງໂດຍ LCTC*
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	ເລກທີ 2118/ຈທລ ລົງວັນທີ 17 ມິຖຸນາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຈຳໜ່າຍພືດສະໝຸນໄພເພື່ອສິ່ງອອກ, ປຸກເພື່ອຂາຍພາຍໃນ ແລະ ສົ່ງອອກ	100%
ບໍລິສັດ ກໍ່ສ້າງ ພັດທະນາ ຕິດເມືອງລາວ ຈຳກັດຜູ້ດຽວ	ເລກທີ 2434.ຈທລ ລົງວັນທີ 05 ກໍລະກົດ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການບໍລິການທີ່ປຶກສາດ້ານການກໍ່ສ້າງ	100%
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	ເລກທີ 2422/ຈທລ ລົງວັນທີ 10 ສິງຫາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ	100%
ບໍລິສັດ ສະຖາປັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 3113/ຈທລ ລົງວັນທີ 26 ກັນຍາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການອອກແບບອາຄານ, ການອອກແບບ ການທ່ອງທ່ຽວ, ອອກແບບ ແລະ ກໍ່ສ້າງ ວຽກງານສາທາລະນະ	100%
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	ເລກທີ 0414/ຈທລ ລົງວັນທີ 01 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຜະລິດສື່ບັນເທີງ, ຮູບເງົາ ແລະ ການ ໂຄສະນາ	100%
ບໍລິສັດ ພັດທະນາຮັບສະບາກອນແຮ່ລາວ ຈຳກັດ	ເລກທີ 0767/ຈທລ ລົງວັນທີ 29 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່	100%
ບໍລິສັດ ສະຖາປັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 1495/ຈທລ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ,	ການສຳຫຼວດ ແລະ ການອອກແບບອາຄານ	100%
ບໍລິສັດ ສຸນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ເລກທີ 1485/ຈທລ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການທີ່ປຶກສາທາງດ້ານການສຶກສາ	100%

2. ພື້ນຖານຂອງການກະກຽມ

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາໜ່ວຍງານສາທາລະນະປະໂຫຍດ ລວມທັງບໍລິສັດຈົດທະບຽນຄວບຄຸມ ນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງວິຊາການ, ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫ້ວໜ່ວຍຖືຫຸ້ນປະໂຫຍດສາທາລະນະ ໄດ້ຂະຫຍາຍໃຫ້ເລື່ອນເວລາການສະໝັກ IFRS ໄປຈົນເຖິງວັນທີ 1 ມັງກອນ 2026.

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024, ບໍລິສັດ ແມ່ນໄດ້ຖືກກະກຽມເອກະສານລາຍງານການເງິນແຍກກິດຈະການໂດຍ ສອດຄ່ອງກັບນະໂຍບາຍການບັນຊີຊຶ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງ ເອກະສານລາຍງານການເງິນແຍກກິດຈະການ. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນແຍກກິດຈະການ, ຜົນຂອງການດຳເນີນງານແຍກກິດຈະການ ແລະ ກະແສເງິນສົດແຍກກິດຈະການຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບທົ່ວໄປ.

ເອກະສານລາຍງານການເງິນ ແຍກກິດຈະການຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນແຍກກິດຈະການສະບັບນີ້ ແມ່ນຖືກລາຍງານເປັນສະກຸນເງິນກີບລາວ ("ກີບ"). ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ນະວັນທີ 31 ທັນວາ 2024, ອັດຕາເງິນເຟີ້ສະສົມຂອງ ສປປ ລາວ ໃນໄລຍະ 36 ເດືອນທີ່ຜ່ານມາສູງກວ່າ 100%, ເຊິ່ງຈັດຢູ່ໃນກຸ່ມປະເທດທີ່ເສດຖະກິດມີພາວະອັດຕາເງິນເຟີ້ລະດັບສູງສຸດ ອີງຕາມການລາຍງານຈາກເວັບໄຊ້ຂອງທະນາຄານແຫ່ງ ສປປ ລາວ (www.bol.gov.la.com). ເຖິງຢ່າງໃດກໍຕາມ, ບໍລິສັດຍັງບໍ່ທັນປະຕິບັດນະໂຍບາຍການບັນຊີໃດໆ ຕໍ່ກັບຜົນກະທົບຈາກພາວະອັດຕາເງິນເຟີ້ລະດັບສູງສຸດ ເນື່ອງຈາກຍັງບໍ່ມີຄຳແນະນຳສະເພາະຈາກກະຊວງການເງິນ ຕໍ່ກັບບັນຫາດັ່ງກ່າວ

ຂໍ້ສົມມຸດຖານທ່ຽວກັບຄວນສົນເນື່ອງຂອງການດຳເນີນທຸລະກິດໃນການກະກຽມບົດລາຍງານການການເງິນແຍກກິດຈະການ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 4.8 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024, ນະວັນທີດັ່ງກ່າວ, ບໍລິສັດມີຍອດຂາດທຶນສະສົມມູນຄ່າ 79.86 ຕື້ກີບເກີນທຶນຈົດທະບຽນທີ່ຈົດລົງໄວ້ 59.86 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງບໍລິສັດຫຼາຍກວ່າຊັບສິນໝຸນວຽນ 55.54 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບໜຂ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ບໍລິສັດໄດ້ປັບປຸງແກ້ໄຂການເຄື່ອນໄຫວທຸລະກິດຕົ້ນຕໍໃຫ້ສອດຄ່ອງກັບ ໃບອະນຸຍາດການລົງທຶນສະບັບເລກທີ 119.2023/ກຜທ ລົງວັນທີ 02 ພຶດສະພາ 2023 ອອກໂດຍກະຊວງແຜນການ ແລະ ການລົງທຶນ. ກິດຈະກຳຫຼັກຂອງບໍລິສັດໄດ້ຢຸດຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍບ່ອຍຊີ້ມັງ ແລະ ຜະລິດຕະພັນຊີ້ມັງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ການບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະທ້ອນສະພາບການຊຳລະສະສາງ ແລະ ແຜນການດຳເນີນງານ ໂດຍອີງໃສ່ບົນພື້ນຖານຄວາມຄາດຫວັງ ຈາກການສະ ທ້ອນສະພາບທາງການເງິນຂອງຜູ້ຖືຮຸ້ນ ແລະ ຄວາມສາມາດໃນການຮັບເງິນການຂາຍຮຸ້ນຄືນ. ຜູ້ບໍລິຫານຂອງບໍລິສັດໄດ້ຮັບເອກະສານສະທ້ອນສະພາບທາງການເງິນ ຈາກຝຸ່ນບານ ເຫ່ງຊີ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ເຊິ່ງໄດ້ກຳນົດໃນຂໍ້ຕົກລົງໃນການສະໜອງການຊ່ວຍເຫຼືອທາງການເງິນໃຫ້ມີຄວາມພຽງພໍຕໍ່ການສະສາງໜີ້ສິນເມື່ອຄົບກຳນົດໃນການຊຳລະໃນປີຕໍ່ໄປໂດຍບໍ່ມີການຫຼຸດຜ່ອນ. ບົນພື້ນຖານນີ້, ຄະນະອຳນວຍການຂອງບໍລິສັດບັງຄັບໃຫ້ພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການເງິນແຍກກິດຈະການຂອງບໍລິສັດບົນພື້ນຖານຄວນສົນເນື່ອງຂອງການດຳເນີນທຸລະກິດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

*ຍໍ້ຍຸ້ນຸ້ຄຸ້ຖຸ້ນ່ຽ້ວ້ຽ້ວ້ຽ້ວ້

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນໃນສາງ

ຊັບສິນທີ່ຊື້ເຂົ້າມາໃໝ່ ແລະ ກຳລັງກໍ່ສ້າງເພື່ອຂາຍໃນການດຳເນີນທຸລະກິດຕໍ່ເວໄປ, ແທນທີ່ຈະຖືໄວ້ເພື່ອເຊົ່າ ຫຼື ເປັນການເພີ່ມມູນຄ່າຫົ້ນ, ຖືເປັນຊັບສິນໃນສາງ ແລະ ຖືກວັດແທກດ້ວຍຕົ້ນທຶນທີ່ຕ່ຳກວ່າ ແລະ ມູນຄ່າສຸດທິທີ່ຄາດຈະໄດ້ຮັບ (NRV).

ໂດຍສະເພາະ, ນີ້ແມ່ນຊັບສິນທີ່ປ່ອຍໄວ້ທີ່ບໍລິສັດພັດທະນາ ແລະ ຕັ້ງໃຈຈະຂາຍກ່ອນ, ຫຼື ເມື່ອສຳເລັດການພັດທະນາ.

ຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາຊັບສິນແຕ່ລະຢ່າງຖືກລະບຸສະຖານທີ່ ແລະ ເງື່ອນໄຂໃຫ້ເໝາະສົມ ປະກອບມີດັ່ງນີ້:

- ຈຳນວນເງິນທີ່ຈ່າຍໃຫ້ຜູ້ຮັບເໝົາເພື່ອການພັດທະນາ
- ລາຍຈ່າຍຂອງການກູ້ຢືມ, ຄ່າໃຊ້ຈ່າຍໃນການວາງແຜນ ແລະ ການອອກແບບ, ຄ່າໃຊ້ຈ່າຍໃນການກະກຽມສະຖານທີ່, ຄ່າທຳນຽມຕົ້ນທຶນວິຊາຊີບສຳລັບການບໍລິການທາງດ້ານກົດໝາຍ, ຄ່າໃຊ້ຈ່າຍໃນການພັດທະນາ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ

ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ແມ່ນການຄາດຄະເນລາຄາຂາຍໃນການດຳເນີນທຸລະກິດຕໍ່ເວໄປ, ໂດຍອີງໃສ່ລາຄາຕະຫຼາດໃນວັນທີ່ທີ່ລາຍງານ, ຫັກດ້ວຍຕົ້ນທຶນທີ່ຄາດຄະເນໃນການດຳເນີນງານໃຫ້ສຳເລັດ ແລະ ຄ່າໃຊ້ຈ່າຍທີ່ຄາດຄະເນທີ່ຈຳເປັນທີ່ໃຊ້ເພື່ອການຂາຍ.

ເມື່ອຊັບສິນໃນສາງຖືກຂາຍ, ມູນຄ່າຕາມບັນຊີຂອງຊັບສິນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາທີ່ລາຍຮັບທີ່ກ່ຽວຂ້ອງຖືກຮັບຮູ້. ມູນຄ່າຕາມບັນຊີຂອງຊັບສິນໃນສາງທີ່ຮັບຮູ້ໃນຄ່າໃຊ ຫຼື ຂາດທຶນ ແມ່ນຖືກກຳນົດໂດຍອ້າງອີງໃສ່ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງຂອງຊັບສິນທີ່ຂາຍ ແລະ ການຈັດສັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆໂດຍອີງໃສ່ຂະໜາດທີ່ກ່ຽວຂ້ອງຂອງຊັບສິນທີ່ຂາຍ.

ເງິນຮັບລ່ວງໜ້າເພື່ອມູນຄ່າເຄື່ອງໃນສາງ

ເງິນຮັບລ່ວງໜ້າເພື່ອມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີ່ຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເງິນຮັບລ່ວງໜ້າແມ່ນບັນທຶກເຂົ້າລາຍຈ່າຍໃນການດຳເນີນງານສຳລັບເງິນແຮທີ່ຫັກເພີ່ມເຕີມ ແລະ ຈະຖືກບັນທຶກເຂົ້າໃນລາຍຮັບໃນການດຳເນີນງານໃນກໍລະນີເກັບຄືນເງິນແຮຈາກເຄື່ອງໃນສາງ ທີ່ສະແດງໃນໃນລາຍງານຜົນການດຳເນີນງານແຍກກິດຈະການ.

ການລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງບໍລິສັດມີອຳນາດຄວບຄຸມກິດຈະການ. ບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກລົງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ບໍລິສັດໃນເອກະສານລາຍງານການເງິນສົ່ງລວມ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມຢຸດເຊົາ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງບໍລິສັດ ແລະ ບໍລິສັດໃນເຄືອແມ່ນຈະຖືກລົບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນ (ບົດອະທິບາຍເລກທີ 7).

ໃນເອກະສານລາຍງານການເງິນແຍກກິດຈະການ, ເງິນລົງທຶນໃນບໍລິສັດໃນເຄືອແມ່ນບັນທຶກໂດຍໃຊ້ວິທີຕົ້ນທຶນ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ໜີ້ຕ້ອງຮັບການຄ້າ ແລະ ເງິນແຂ່ໜີ້ຫວຍຫາ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຂ່ໜີ້ຫວຍຫາ.

ບໍລິສັດມີນະໂຍບາຍເງິນແຂ່ໜີ້ຕ້ອງຮັບຫວຍຫາສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນປີການຄ້ຳປະກັນຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຂ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ສ່ວນປ່ຽນແປງຂອງເງິນແຂ່ໜີ້ຫວຍຫາໄດ້ຖືກຮັບຮູ້ເປັນ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຂ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບເກັບຄືນລາຍຈ່າຍເງິນແຂຢູ່ໃນໃບລາຍງານຜົນການດຳເນີນງານແຍກກິດຈະການ.

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບຮັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ຕົ້ນຈັດທະບຽນທີ່ຖອກແລ້ວ

ຕົ້ນຈັດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນແຍກກິດຈະການເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກຕົ້ນຈັດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆຕົ້ນຈັດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນແຍກກິດຈະການ.

